ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ສໍານັກງານນາຍົກລັດຖະມົນຕີ | ເລກທີ 373 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 22 ຕຸລາ 2007

# ດໍາລັດ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງໂຍທາທິການ ແລະ ຂົນສົ່ງ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສ.ປ.ປ. ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ມະຕິຕົກລົງ ຂອງ ຄະນະປະຈໍາສະພາແຫ່ງຊາດ ວ່າດ້ວຍການປ່ຽນຊື່ກະຊວງ, ອົງການທຽບເທົ່າກະຊວງ ສະບັບເລກທີ 72/ສພຊ, ລົງວັນທີ 12 ຕຸລາ 2007;
- ອີງຕາມ ໃບສະເໜີ ຂອງ ທ່ານລັດຖະມົນຕີວ່າການ ກະຊວງຄົມມະນາຄົມ, ຂົນສົ່ງ, ໄປສະນີ ແລະ ກໍ່ສ້າງ ສະບັບເລກທີ 13200/ຄຂປກ, ລົງວັນທີ 19 ຕຸລາ 2007 ແລະ ໃບສະເໜີ ຂອງ ທ່ານລັດຖະມົນຕີປະຈໍາ ສໍານັກງານນາຍົກລັດຖະມົນຕີ, ຫົວໜ້າທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ສະບັບເລກທີ 100/ທປຄ.ກພລ, ລົງວັນທີ 17 ຕຸລາ 2007.

## ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ. ລາວ ອອກດໍາລັດ:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດໍາລັດສະບັບນີ້ ກໍານົດລະອຽດ ກ່ຽວກັບທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ລະບອບແບບແຜນວິທີເຮັດວຽກ ຂອງ ກະຊວງໂຍທາທິການ

ແລະ ຂົນສົ່ງ ເພື່ອເປັນບ່ອນອີງໃນການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ແນໃສ່ຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ ແລະ ລັດຖະບານ ກ່ຽວກັບຂະແໜງໂຍທາທິການ ແລະ ຂົນສົ່ງ ໃນຂອບເຂດທົ່ວປະເທດ.

**ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ**

**ກະຊວງໂຍທາທິການ ແລະ ຂົນສົ່ງ** ຊຽນຫຍໍ້: **"ຍ.ທ.ຂ"** ຊຽນເປັນພາສາຝຣັ່ງ: **Ministère de Travaux Publics et de Transports** (*ຊຽນຫຍໍ້: MTPT* ) ແມ່ນກົງຈັກຂອງລັດຖະບານ, ມີພາລະບົດບາດ ເປັນເສນາທິການໃຫ້ແກ່ລັດຖະບານ ແລະ ຄຸ້ມຄອງມະຫາພາກ ກ່ຽວກັບຂະແໜງການຄົມມະນາຄົມ, ຂົນສົ່ງທາງບົກ, ທາງນ້ຳ, ທາງອາກາດ, ທາງລົດໄຟ, ການເຄຫາສະຖານ, ຜັງເມືອງ ແລະ ນ້ຳປະປາ ໃນຂອບເຂດທົ່ວປະເທດ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3. ໜ້າທີ່**

ກະຊວງໂຍທາທິການ ແລະ ຂົນສົ່ງ ມີໜ້າທີ່ດັ່ງນີ້:

**3.1** ຄົ້ນຄ້ວາຮ່າງນະໂຍບາຍ ແລະ ແຜນຍຸດທະສາດ ກ່ຽວກັບວຽກງານຄົມມະນາຄົມ, ຂົນສົ່ງທາງບົກ, ທາງນ້ຳ, ທາງອາກາດ, ທາງລົດໄຟ; ການເຄຫາສະຖານ, ຜັງເມືອງ ແລະ ນ້ຳປະປາ ເພື່ອສະເໜີລັດຖະບານພິຈາລະນາ;

**3.2** ຄົ້ນຄ້ວາຫັນເອົານະໂຍບາຍ, ແຜນການ, ມະຕິຕົກລົງຂອງລັດຖະບານ ມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດຂອງຂະແໜງການຕົນ ພ້ອມທັງຈັດຕັ້ງປະຕິບັດ;

**3.3** ສະເໜີປັບປຸງ ແລະ ສ້າງຮ່າງກົດໝາຍ, ລັດຖະບັນຍັດ, ລັດຖະດຳລັດ, ດຳລັດ ຕໍ່ ລັດຖະບານ; ອອກຂໍ້ຕົກລົງ, ຄຳສັ່ງ, ບົດແນະນຳ ແລະ ແຈ້ງການ ເພື່ອຄຸ້ມຄອງມະຫາພາກ ໃນຂະແໜງການໂຍທາທິການ ແລະ ຂົນສົ່ງ;

**3.4** ຄຸ້ມຄອງ, ປັບປຸງ ແລະ ຂະຫຍາຍຕາໜ່າງເສັ້ນທາງທຸກລະດັບ, ກິດຈະການປ້ອງກັນຕະຝັ່ງເຈື່ອນ. ຄຸ້ມຄອງລະບົບການຂົນສົ່ງທາງບົກ, ທາງນ້ຳ, ທາງທະເລ, ທາງອາກາດ, ທາງລົດໄຟ. ຄຸ້ມຄອງການຂັບຂີ່, ເຕັກນິກພາຫະນະກົນຈັກທຸກຊະນິດ ທີ່ຮັບໃຊ້ແກ່ການຂົນສົ່ງ (ຍົກເວັ້ນພາຫະນະກົນຈັກສະເພາະ ຂອງ ກຳລັງປ້ອງກັນຊາດ, ປ້ອງກັນຄວາມສະຫງົບ); ຄຸ້ມຄອງການສື່ສານ, ຄຸ້ມຄອງເຄຫາສະຖານ, ການປຸກສ້າງເຄຫາສະຖານ, ຜັງເມືອງ ແລະ ນ້ຳປະປາ ໃນຂອບເຂດທົ່ວປະເທດ;

**3.5** ຊີ້ນຳ ແລະ ຄຸ້ມຄອງຕາມສາຍຕັ້ງ ໃນການຈັດຕັ້ງປະຕິບັດວຽກງານ ແລະ ບຸກຄະລາກອນ ຂອງຂະແໜງໂຍທາທິການ ແລະ ຂົນສົ່ງ ໂດຍປະສານສົມທົບ ກັບ ອົງການປົກຄອງທ້ອງຖິ່ນ;

**3.6** ຄຸ້ມຄອງ, ບຳລຸງ, ສ້າງ, ບັນຈຸ, ສັບຊ້ອນ, ຍົກຍ້າຍ, ສຶກສາອົບຮົມ ແລະ ປະຕິບັດນະໂຍບາຍຕໍ່ພະນັກງານ ໃນຂະແໜງການຂອງຕົນຢ່າງຖືກຕ້ອງ ຕາມນະໂຍບາຍຂອງພັກ ແລະ ລັດຖະບານ;

3.7 ຊີ້ນຳ, ຊຸກຍູ້, ກວດກາ ແລະ ສະຫຼຸບສັງລວມສະພາບການຈັດຕັ້ງປະຕິບັດວຽກງານຂອງຂະແໜງການຕົນ ແລ້ວລາຍງານໃຫ້ລັດຖະບານ ແລະ ນາຍົກລັດຖະມົນຕີ;

3.8 ຂຶ້ນແຜນ, ຄຸ້ມຄອງ ແລະ ນຳໃຊ້ງົບປະມານຂອງຂະແໜງຕົນ ລວມທັງການຂຶ້ນແຜນ ແລະ ຄຸ້ມຄອງຊັບສິນບັດທີ່ລັດຖະບານປະກອບໃຫ້;

3.9 ຊີ້ນຳ, ຊຸກຍູ້, ກວດກາ ແລະ ຄຸ້ມຄອງການເຄື່ອນໄຫວ ຂອງ ບັນດາຫົວໜ່ວຍການຈັດຕັ້ງບໍລິຫານ, ບໍລິຫານວິຊາການ ແລະ ທຸລະກິດ ໃນຂອບເຂດຂະແໜງການຂອງຕົນ ຕາມຂໍ້ກຳນົດ, ລະບຽບການ ແລະ ກົດໝາຍທີ່ໄດ້ວາງອອກ;

3.10 ຄົ້ນຄວ້າ, ສ້າງ, ປະກາດໃຊ້ລະບອບແບບແຜນວິທີເຮັດວຽກ ຂອງ ກະຊວງ ຍ.ທ.ຂ, ລະບຽບການຄຸ້ມຄອງດ້ານຕ່າງໆ ລວມທັງໂຄງປະກອບການຈັດຕັ້ງ, ການກຳນົດຈຳນວນພົນ, ການກຳນົດຕຳແໜ່ງງານ ແລະ ມາດຖານພະນັກງານ;

3.11 ພົວພັນ, ຮ່ວມມືກັບຕ່າງປະເທດ, ບັນດາອົງການຈັດຕັ້ງສາກົນ ແລະ ພາກສ່ວນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ເພື່ອຍາດແຍ່ງທຶນຮອນ ແລະ ເຕັກນິກວິຊາການ ເຂົ້າໃນການພັດທະນາວຽກງານຂະແໜງໂຍທາທິການ ແລະ ຂົນສົ່ງ ຕາມການມອບໝາຍ ແລະ ຕາມແຜນພັດທະນາຂອງລັດຖະບານ;

3.12 ເປັນເຈົ້າການໃນການຄົ້ນຄ້ວາ, ສົ່ງເສີມຫົວຄິດປະດິດສ້າງ, ນຳໃຊ້ຄວາມກ້າວໜ້າ ຂອງ ວິທະຍາສາດເຕັກໂນໂລຊີໃໝ່ ເຂົ້າໃນຂະແໜງການຂອງຕົນ;

3.13 ປະຕິບັດໜ້າທີ່ອື່ນໆ ທີ່ລັດຖະບານ ມອບໝາຍໃຫ້ສະເພາະ ແລະ ຕາມທີ່ໄດ້ກຳນົດໄວ້ ໃນລັດຖະທຳມະນູນ ແລະ ລະບຽບກົດໝາຍ.

## ມາດຕາ 4. ຂອບເຂດສິດ

ກະຊວງໂຍທາທິການ ແລະ ຂົນສົ່ງ ມີຂອບເຂດສິດດັ່ງນີ້:

4.1 ສະເໜີປັບປຸງ, ສ້າງຕັ້ງ ຫຼື ລົບລ້າງກົງຈັກການຈັດຕັ້ງ, ຕຳແໜ່ງງານ ທີ່ຂຶ້ນກັບສິດຄຸ້ມຄອງຂອງຕົນ;

4.2 ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ເພື່ອຄຸ້ມຄອງມະຫາພາກ ໃນຂະແໜງການຂອງຕົນ;

4.3 ສະເໜີ ແລະ ແຕ່ງຕັ້ງ, ເລື່ອນຊັ້ນ, ຍ້ອງຍໍ, ຍົກຍ້າຍ ປະຕິບັດວິໃນ, ປົດຕຳແໜ່ງລັດຖະກອນທີ່ຂຶ້ນກັບສິດຄຸ້ມຄອງຂອງຕົນ ແລະ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບລັດຖະກອນ;

4.4 ພົວພັນປະສານສົມທົບກັບທຸກອົງການຈັດຕັ້ງຂອງພັກ, ລັດ, ສັງຄົມ, ສາກົນ ທີ່ຢູ່ພາຍໃນປະເທດ ແລະ ປະຊາຊົນ ເພື່ອພ້ອມກັນປະຕິບັດນະໂຍບາຍ, ດຳລັດ, ຄຳສັ່ງ ແລະ ແຈ້ງການຕ່າງໆ ຂອງລັດຖະບານ ທີ່ກ່ຽວຂ້ອງກັບຂະແໜງການຕົນ;

4.5 ດຳເນີນການກວດກາ, ກວດການ, ໃນການປະຕິບັດກົດໝາຍ ທີ່ພົວພັນເຖິງຂະແໜງການຕົນຢ່າງຮອບດ້ານເປັນປະຈຳ, ສະເໜີຕໍ່ອົງການທີ່ມີສິດອຳນາດ ເພື່ອໃຊ້ມາດຕະການຕ່າງໆ ຕໍ່ຜູ້ລະເມີດລະບຽບກົດໝາຍທີ່ລັດວາງອອກ;

4.6 ເຈລະຈາເຊັນສັນຍາ ແລະ ຂໍ້ຜູກພັນ ກັບພາກສ່ວນທີ່ກ່ຽວຂ້ອງຢູ່ພາຍໃນ, ຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ໂດຍໄດ້ຮັບອະນຸຍາດຈາກລັດຖະບານ;

4.7 ສະເໜີສ້າງຕັ້ງ, ຍຸບເລີກ ບັນດາຫົວໜ່ວຍວິສະຫະກິດຕ່າງໆ ໃນຂະແໜງການຂອງຕົນ;

4.8 ນຳໃຊ້ງົບປະມານຂອງຂະແໜງການຕົນ ຕາມທີ່ລັດຖະບານອະນຸມັດແລ້ວ. ພ້ອມທັງຄຸ້ມຄອງ ບັນດາລາຍຮັບຕ່າງໆ ທີ່ມີຢູ່ໃນຂະແໜງການຕົນ;

4.9 ໂຄສະນາເຜີຍແຜ່ ແນວທາງນະໂຍບາຍ, ມະຕິຄຳສັ່ງ, ລະບຽບກົດໝາຍ, ຜົນສຳເລັດທາງດ້ານ ເສດຖະກິດ, ເຕັກນິກ, ຫົວຄິດປະດິດສ້າງ ແລະ ເຕັກໂນໂລຊີໃໝ່ ໃນຂະແໜງການຕົນ ແລະ ມີສິດປົກປ້ອງລິຂະສິດຂອງຕົນ;

4.10 ສະເໜີລົບລ້າງຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການຂອງຂະແໜງການອື່ນ ທີ່ເຫັນວ່າບໍ່ ສອດຄ່ອງກັບຂະແໜງໂຍທາທິການ ແລະ ຂົນສົ່ງ. ນອກຈາກນີ້ ກໍ່ຍັງມີສິດລົບລ້າງ, ຍົກເລີກຂໍ້ ກຳນົດກົດລະບຽບຂອງອົງການຈັດຕັ້ງຂັ້ນລຸ່ມ ທີ່ເຫັນວ່າບໍ່ສອດຄ່ອງ;

4.11 ປະຕິບັດສິດອື່ນໆ ທີ່ລັດຖະບານ ມອບໝາຍໃຫ້ສະເພາະ ແລະ ຕາມທີ່ໄດ້ກຳນົດໄວ້ ໃນລັດຖະ ທຳມະນູນ ແລະ ລະບຽບກົດໝາຍ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

**ມາດຕາ 5. ໂຄງປະກອບກົງຈັກ ຂອງ ກະຊວງໂຍທາທິການ ແລະ ຂົນສົ່ງ ປະກອບດ້ວຍ:**

**5.1 ຂັ້ນສູນກາງ**

1. ຫ້ອງການ;
2. ກົມ ຈັດຕັ້ງ ແລະ ພະນັກງານ;
3. ກົມ ແຜນການ ແລະ ການຮ່ວມມື;
4. ກົມ ກວດກາ;
5. ກົມ ຂົວທາງ;
6. ກົມ ຂົນສົ່ງ;
7. ກົມ ເຄຫາ ແລະ ຜັງເມືອງ;
8. ກົມ ການບິນພົນລະເຮືອນ;
9. ກົມ ໂຍທາທິການທາງນ້ຳ;
10. ອົງການ ທາງລົດໄຟ;
11. ສະຖາບັນ ໂຍທາ ແລະ ຂົນສົ່ງ.

5.2 ໃນເມື່ອມີຄວາມຈຳເປັນ ລັດຖະມົນຕີວ່າການ ກະຊວງໂຍທາທິການ ແລະ ຂົນສົ່ງ ມີສິດສ້າງຕັ້ງ ສະພາວິທະຍາສາດເຕັກນິກ, ຄະນະກຳມະການ, ສູນຝຶກໂຍທາ ແລະ ຂົນສົ່ງ, ອົງການ ແລະ ໂຮງຮຽນຂຶ້ນ ໂດຍອີງໃສ່ຄວາມເໝາະສົມ ແລະ ຕາມຂອບເຂດສິດທີ່ກົດໝາຍກຳນົດ.

5.3 ຂັ້ນທ້ອງຖິ່ນ

1. ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນ;
2. ຫ້ອງການ ໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ (ຖ້າຈຳເປັນ).

## ມາດຕາ 6. ໂຄງປະກອບບຸກຄະລາກອນ ຂອງ ກະຊວງໂຍທາທິການ ແລະ ຂົນສົ່ງ

6.1 ກະຊວງໂຍທາທິການ ແລະ ຂົນສົ່ງ ປະກອບມີ: ລັດຖະມົນຕີວ່າການ 01 ທ່ານ, ລັດຖະມົນຕີວ່າການ ມີໜ້າທີ່ຄຸ້ມຄອງ ແລະ ນຳພາຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ ແລະ ລັດຖະບານ; ຮັບຜິດຊອບໂດຍກົງ ຕໍ່ ລັດຖະບານ ແລະ ນາຍົກລັດຖະມົນຕີ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງໃນການເຄື່ອນໄຫວວຽກງານ ແລະ ປະຕິບັດໜ້າທີ່, ຂອບເຂດສິດຂອງ ກະຊວງ ຍ.ທ.ຂ ຕາມທີ່ກຳນົດຢູ່ໃນມາດຕາ 3 ແລະ ມາດຕາ 4 ຂອງດຳລັດສະບັບນີ້;

6.2 ກະຊວງໂຍທາທິການ ແລະ ຂົນສົ່ງ ມີລັດຖະມົນຕີຊ່ວຍວ່າການຈຳນວນໜຶ່ງ ເປັນຜູ້ຊ່ວຍວຽກ ລັດຖະມົນຕີວ່າການ ແລະ ລົງເລິກຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍ ຂອງ ລັດຖະມົນຕີວ່າການ ກະຊວງ ຍ.ທ.ຂ;

6.3 ກະຊວງໂຍທາທິການ ແລະ ຂົນສົ່ງ ມີຫົວໜ້າ, ຮອງຫົວໜ້າຫ້ອງການ; ຫົວໜ້າ, ຮອງຫົວໜ້າກົມ; ຫົວໜ້າ, ຮອງຫົວໜ້າສະຖາບັນ; ພະ ນັກງານວິຊາການ ແລະ ພະນັກງານຮັບໃຊ້ຈຳນວນໜຶ່ງ ຊຶ່ງບັນຈຸເຂົ້າຕຳແໜ່ງງານຕ່າງໆ ຕາມຄວາມເໝາະສົມ;

6.4 ຢູ່ທ້ອງຖິ່ນ ມີຫົວໜ້າ, ຮອງຫົວໜ້າ ພະແນກໂຍທາທິການ ແລະ ຂົນສົ່ງ ຂັ້ນແຂວງ; ຫົວໜ້າ, ຮອງຫົວໜ້າ ຫ້ອງການໂຍທາທິການ ແລະ ຂົນສົ່ງ ຂັ້ນເມືອງ ແລະ ພະນັກງານວິຊາການຈຳນວນໜຶ່ງ ທີ່ຂຶ້ນກັບການຊີ້ນຳ ແລະ ຄຸ້ມຄອງທາງດ້ານວິຊາການ ຈາກ ກະຊວງໂຍທາທິການ ແລະ ຂົນສົ່ງ.

# ໝວດທີ IV
# ລະບອບແບບແຜນວິທີເຮັດວຽກ

## ມາດຕາ 7. ກະຊວງໂຍທາທິການ ແລະ ຂົນສົ່ງ ເຄື່ອນໄຫວ ແລະ ດຳເນີນງານຕາມຫຼັກການລວມດັ່ງນີ້:

7.1 ປະຕິບັດລະບອບຫົວໜ້າດຽວ ຕາມລະບົບແບ່ງຂັ້ນຄຸ້ມຄອງບົນພື້ນຖານ ຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ, ມີການແບ່ງງານກັນຢ່າງຈະແຈ້ງ ໃນໝູ່ຄະນະ ແລະ ໃນທຸກໆ ຂັ້ນ, ພ້ອມທັງມອບ ສິດອຳນາດໃນລະດັບອັນແນ່ນອນ ແລະ ສົມເຫດສົມຜົນ ໃນການແກ້ໄຂບັນຫາຕ່າງໆ ຢູ່ພາຍໃນຂອບເຂດຂອງແຕ່ລະຂັ້ນ ແລະ ຂອງແຕ່ລະຄົນ;

7.2 ການເຄື່ອນໄຫວ ແລະ ການດຳເນີນງານ ຂອງ ກະຊວງໂຍທາທິການ ແລະ ຂົນສົ່ງ ຕ້ອງຢູ່ບົນພື້ນຖານແນວທາງ, ແຜນນະໂຍບາຍ, ແຜນຍຸດທະສາດຂອງພັກ ແລະ ລັດຖະບານ ໃນແຕ່ລະໄລຍະ;

7.3 ອີງໃສ່ແນວທາງນະໂຍບາຍ ແລະ ແຜນຍຸດທະສາດຂອງພັກ, ລັດວາງອອກ, ກະຊວງໂຍທາທິການ ແລະ ຂົນສົ່ງ ຕ້ອງຫັນເປັນແຜນໄລຍະຍາວ, ແຜນການປະຈຳປີ, ຫັນເປັນແຜນງານ ແລະ ໂຄງການລະອຽດຕ່າງໆ ໃນທົ່ວລະບົບຄົມມະນາຄົມ, ຂົນສົ່ງທາງບົກ, ທາງນ້ຳ, ທາງອາກາດ, ທາງລົດໄຟ; ເຄຫາສະຖານ, ຜັງເມືອງ ແລະ ນ້ຳປະປາ. ທຸກໆ ໂຄງການ ຕ້ອງໄດ້ຮັບການສຶກສາ, ເລືອກເຟັ້ນ, ສຳຫຼວດ ອອກແບບ, ປຶກສາຫາລື ຕາມຂັ້ນຕອນຢ່າງທີ່ຖ້ວນ ແລະ ຮັບການອະນຸມັດຈາກລັດຖະມົນຕີ ກ່ອນຈະຖືກນຳໄປຈັດຕັ້ງປະຕິບັດ;

7.4 ປະຕິບັດການຄຸ້ມຄອງມະຫາພາກ ໂດຍມີການຕິດຕາມກວດກາຊຸກຍູ້ທຸກຂັ້ນ, ທຸກຂະແໜງວຽກ, ທຸກຫົວໜ່ວຍວິຊາການ, ຫົວໜ່ວຍບໍລິຫານ ແລະ ຫົວໜ່ວຍທຸລະກິດ ທີ່ເຄື່ອນໄຫວຢູ່ໃນຂົງເຂດຂະແໜງການຂອງຕົນ;

7.5 ປະຕິບັດລະບອບປະຊຸມປະຈຳສັບປະດາ, ປະຈຳເດືອນ, ປະຈຳປີ, ສະຫຼຸບ-ສັງລວມຕີລາຄາ ແລ້ວລາຍງານໃຫ້ລັດຖະບານ, ນາຍົກລັດຖະມົນຕີ ຢ່າງເປັນປົກກະຕິ;

7.6 ຫັນລົງຮາກຖານ, ປະສານສົມທົບກັບບັນດາຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດວຽກງານໂຍທາທິການ ແລະ ຂົນສົ່ງ ໃຫ້ປະກົດເປັນຈິງ.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 8. ງົບປະມານ ແລະ ກາປະທັບ**

ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ບັນດາອົງການຈັດຕັ້ງທີ່ສັງກັດໃນໂຄງປະກອບການຈັດຕັ້ງ ຂອງ ກະຊວງໂຍທາທິການ ແລະ ຂົນສົ່ງ ມີງົບປະມານ ແລະ ກາປະທັບຂອງຕົນທີ່ລັດປະກອບໃຫ້ ເພື່ອເຄື່ອນໄຫວວຽກງານທາງລັດຖະການ ແລະ ເພື່ອຄຸ້ມຄອງຕາມສາຍວິຊາການ ຕາມລະບຽບກົດໝາຍກຳນົດ.

**ມາດຕາ 9. ການຜັນຂະຫຍາຍ**

ມອບໃຫ້ລັດຖະມົນຕີວ່າການ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຄົ້ນຄ້ວາ, ຜັນຂະຫຍາຍ ແລະ ກຳນົດລະອຽດ ກ່ຽວກັບພາລະບົດບາດ, ໜ້າທີ່, ຂອບເຂດສິດ ແລະ ໂຄງປະກອບການຈັດຕັ້ງ ຂອງ ຫ້ອງການ, ບັນດາກົມ, ສະຖາບັນ ແລະ ອົງການຈັດຕັ້ງທີ່ຂຶ້ນກັບຕົນ ເພື່ອຈັດຕັ້ງປະຕິບັດວຽກງານຂອງຕົນໃຫ້ໄດ້ຮັບຜົນດີ ບົນພື້ນຖານການຄົ້ນຄ້ວາປະກອບຄຳເຫັນ ຂອງອົງ ການຈັດຕັ້ງທີ່ກ່ຽວຂ້ອງ.

**ມາດຕາ 10. ການຈັດຕັ້ງປະຕິບັດ**

ກະຊວງໂຍທາທິການ ແລະ ຂົນສົ່ງ, ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ອຳນວຍຄວາມສະດວກ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 11. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 66/ນຍ ລົງວັນທີ 20 ພຶດສະພາ 1999.

**ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ. ລາວ**

ນາຍົກລັດຖະມົນຕີ

ບົວສອນ ບຸບຜາວັນ